ບົດຂ່າວໜັງສືພິມ - Press Release

## ປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ ຈະຖືກສະເໜີເພື່ອພິຈາລະນາເຂົ້າໃນບັນຊີເຂດມໍລະດົກໂລກຂອງອົງການ ອຸຍແນັສໂກ

**ວຽງຈັນ ສປປ ລາວ** _ ລະຫວ່າງ ວັນທີ 24-26 ກໍລະກົດ 2009 ນີ້ ຄະນະກຳມະການວິສາມັນທີ່ໄດ້ ແຕ່ງຕັ້ງຂຶ້ນເພື່ອ ກະກຽມການນຳສະເໜີປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ ຕໍ່ອົງການ ອຸຍແນັສໂກ ເຊິ່ງນຳໂດຍທ່ານ ຫມູນແກ້ວ ອໍລະບູນ ລັດຖະມົນຕີວ່າການ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ໄດ້ລົງປະຕິບັດວຽກງານ ທີ່ ແຂວງ ຄຳມ່ວນ.

ການລົງປະຕິບັດວຽກງານໃນຄັ້ງນີ້ ແມ່ນເພື່ອສືບຕໍ່ຄົ້ນຄວ້າກ່ຽວກັບຄວາມເປັນໄປໄດ້ໃນການສະເໜີ ເຂດປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ ເຂົ້າໃນລາຍບັນຊີລາຍຊື່ຂອງມໍລະດົກໂລກ ໂດຍໄດ້ດຳເນີນ ສາມໜ້າວຽກຫລັກ ເຊັ່ນ: ການລົງສຳຫລວດພາກສະໜາມ, ການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ແລະ ການຈັດກອງປະຊຸມປຶກສາຫາລືຢ່າງເປັນທາງການ. ການລົງປະຕິບັດວຽກງານໃນຄັ້ງນີ້ ແມ່ນໄດ້ຮັບການສະໜັບສະໜູນຈາກອົງການສາກົນເພື່ອການອະນຸລັກທຳມະຊາດ (IUCN) ປະຈຳ ສປປ ລາວ.

ບັນດາຜູ້ແທນທີ່ເຂົ້າຮ່ວມໃນການລົງປຶກສາຫາລືໃນຄັ້ງນີ້ ປະກອບດ້ວຍຕົວແທນຈາກ ກະຊວງຖະແຫຼງ ຂ່າວ ແລະ ວັດທະນະທຳ, ກະຊວງກະສິກຳ ແລະ ປ່າໄມ້, ສຳນັກງານນາຍົກລັດຖະມົນຕີ, ກະຊວງປ້ອງກັນປະເທດ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ຄະນະກຳມະທິການແຫ່ງຊາດລາວເພື່ອ ອຸຍແນັສໂກ, ອົງການທ່ອງທ່ຽວແຫ່ງຊາດ, ຫ້ອງວ່າການແຂວງ ຄຳມ່ວນ ແລະ ຕົວແທນພາກສ່ວນກ່ຽວຂ້ອງຂອງ ແຂວງ ຄຳມ່ວນ ພ້ອມທັງອຳນາດການປົກຄອງເມືອງ ບົວລະພາ.

ເຂດປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ ໄດ້ຮັບການພິຈາລະນາເພື່ອນຳສະເໜີເຂົ້າເປັນເຂດມໍລະດົກ ໂລກ ເນື່ອງຈາກມີທິວທັດທຳມະຊາດ, ຄວາມເປັນເອກະລັກທາງດ້ານທໍລະນີພູມສັນຖານຜາຫີນໜາມໜໍ່ກໍຄືຄວາມອຸດົມສົມບູນຂອງຊີວະນາໆພັນພືດ ແລະ ສັດປ່າ.

ເຂດປ່າສະຫງວນແຫ່ງຊາດດັ່ງກ່າວ ແມ່ນເຊື່ອມຕໍ່ກັບອຸທິຍານແຫ່ງຊາດ ຟອງຫຍ່າ-ແກບັງ ເຊິ່ງໄດ້ຮັບການສະເໜີເຂົ້າເປັນເຂດມໍລະດົກໂລກ ໃນປີ 2003 ແລ້ວ ເຊິ່ງກໍ່ນອນຢູ່ຕາມແນວຊາຍແດນທາງເບື້ອງປະເທດ ຫວຽດນາມ. ເມື່ອໃດໄດ້ມີການສະເໜີ ຫີນໜາມໜໍ່ ເຂົ້າໃນບັນຊີລາຍຊື່ເຂດມໍລະດົກໂລກ ແລ້ວ ມັນຈະເປັນບາດກ້າວສຸດທ້າຍໃນການສ້າງຕັ້ງເຂດ "ມໍລະດົກໂລກທາງທຳມະຊາດຂ້າມແນວ ຊາຍແດນ" ຂຶ້ນ ທີ່ປະກອບດ້ວຍ ຟອງຫຍ່າ-ແກບັງ ແລະ ຫີນໜາມໜໍ່.

ຂະບວນການໃນການນຳສະເໜີເຂດປ່າສະຫງວນ ຫີນໜາມໜໍ່ ຕໍ່ຄະນະກຳມະການມໍລະດົກໂລກ ແມ່ນ ໄດ້ລິເລີ້ມມາຕັ້ງແຕ່ປີ 1998 ໂດຍຜ່ານການສົນທະນາແລກປ່ຽນລະຫວ່າງລັດຖະບານ ສປປ ລາວ ແລະ ຫວຽດນາມ. ນັບຕັ້ງແຕ່ ບາດ

ກ້າວລິເລີ້ມຂອງການຮ່ວມມືເປັນຕົ້ນມາໄດ້ມີຄວາມຄືບໜ້າຫລາຍຢ່າງ ໃນການສ້າງການສະໜັບສະໜູນໃນວຽກງານດັ່ງກ່າວ. ໂດຍການຕົກລົງເຫັນດີສະໜັບສະໜູນການນຳສະເໜີ ຈາກບັນດາພາກສ່ວນເຂົ້າຮ່ວມທີ່ກ່ຽວຂ້ອງ, ການລົງປະຕິບັດວຽກງານໃນຄັ້ງລ່າສຸດໄດ້ບັນລຸຄວາມຄືບໜ້າຢ່າງຫລວງຫລາຍກ່ຽວກັບຄວາມເປັນໄປໄດ້ທີ່ ຫີນໜາມໜໍ່ ຈະກາຍເປັນເຂດມໍລະດົກໂລກທາງທຳມະ ຊາດແຫ່ງທຳອິດໃນ ສປປ ລາວ. ບາດກ້າວຕໍ່ໄປແມ່ນທາງຂະແໜງການທີ່ກ່ຽວຂ້ອງຈະໄດ້ກະກຽມເອກະສານທີ່ຈຳເປັນເພື່ອຍື່ນຕໍ່ລັດຖະບານ ສປປລາວ ໃນການຕັດສິນໃຈຢ່າງເປັນທາງການ ແລະ ເອກະສານເພື່ອການນຳສະເໜີ ຕໍ່ ອົງການ ອຸຍແນັສໂກ.

ການໄດ້ຮັບສະຖານະພາບໃຫ້ເປັນເຂດມໍລະດົກໂລກ ແມ່ນຈະມີຜົນດີໃນຫລາຍໆດ້ານ ເຊັ່ນ ການຍົກສູງ ການປົກປັກຮັກສາເຂດປ່າສະຫງວນ, ປັບປຸງວຽກງານການອະນຸລັກ ແລະ ການນຳໃຊ້ຊັບພະຍາກອນທຳ ມະຊາດຢ່າງຍືນຍົງ ທັງສົ່ງເສີມການທ່ອງທ່ຽວ ແລະ ການຄົ້ນຄວ້າທາງດ້ານວິທະຍາສາດ. ທີ່ສຳຄັນອີກຢ່າງໜຶ່ງ ແມ່ນມັນຈະຊ່ວຍສ້າງໂອກາດເພື່ອສົ່ງເສີມຊີວິດການເປັນຢູ່ໃຫ້ແກ່ຊຸມຊົນທ້ອງຖິ່ນທີ່ດຳລົງຊີວິດຢູ່ໃນບໍລິເວນໃກ້ຄຽງກັບເຂດດັ່ງກ່າວໃຫ້ດີຂື້ນ ພ້ອມນັ້ນຍັງເປັນການປະກອບສ່ວນຕໍ່ການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ, ຂອງແຂວງ ແລະ ຂອງຊາດອີກດ້ວຍ.

ປ່າສະຫງວນແຫ່ງຊາດຫີນໜາມໜໍ່ ມີຄຸນຄ່າທີ່ໂດດເດັ່ນຢ່າງໃຫຍ່ຫລວງ ຄ້າຍຄືກັນກັບຄຸນຄ່າຕ່າງໆທີ່ໄດ້ຮັບການຍອມຮັບຈາກອົງການ ອຸຍແນັສໂກແລ້ວໃນຂະບວນການນຳສະເໜີ ເຂດ ຟອງຫຍ່າ-ແກບັງ ເພື່ອບັນຈຸເຂົ້າໃນບັນຊີຂອງມໍລະດົກໂລກ. ປ່າສະຫງວນແຫ່ງຊາດຫີນໜາມໜໍ່ ມີພື້ນທີ່ 82,000 ເຮັກຕ່າ, ມັນເປັນທີ່ຢູ່ອາໃສຂອງສັດລ້ຽງລູກ ດ້ວຍນົມຫລາຍກວ່າ 40 ຊະນິດ, ມີນົກຫລາຍກວ່າ 200 ຊະນິດ, ເຈຍ 25 ຊະນິດ, ມີສັດເຄິ່ງບົກເຄິ່ງນ້ຳ ແລະ ສັດເລືອຄານຢ່າງໜ້ອຍ 46 ຊະນິດ, ມີ ປາເຖິງ 100 ກວ່າຊະນິດ ແລະ ພືດຫລາຍກວ່າ 520 ຊະນິດ. ໃນນັ້ນສັດປ່າ ແລະ ພືດ ຫລາຍໆຊະນິດ ແມ່ນຖືວ່າເປັນສັດທີ່ໃກ້ຈະ ສູນພັນ ແລະ ຫາຍາກ ບໍ່ແມ່ນພຽງແຕ່ ຢູ່ໃນ ສປປ ລາວ ກໍຄື ໃນທົ່ວໂລກອີກດ້ວຍ.

**Notes to editors**

**For more information, please contact:**

Mr. Xiong Tsechalicha, Senior Programme Officer, IUCN Lao PDR Office
Tel: +856-21-216401 ext. 113, Mobile: +856-20 282 8294 , e-mail: xiong@iucnlao.org

***Photos are available***

**About IUCN (International Union for Conservation of Nature)**

IUCN, the International Union for Conservation of Nature, is the world's oldest and largest global environmental network. IUCN is a democratic union with more than 1,000 government and NGO member organizations, and some 10,000 volunteer scientists in more than 150 countries. IUCN's work is supported by 1,100 professional staff in 62 countries and hundreds of partners in public, NGO and private sectors around the world.

IUCN helps the world find pragmatic solutions to our most pressing environment and development challenges by supporting scientific research; managing field projects all over the world; and bringing governments, NGOs, the UN, international conventions and companies together to develop policy, laws and best practice.